ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 064 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 28.01.2014.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ( ສະບັບປັບປຸງ )

---

- ອີງຕາມ ລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 026 / ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 022 /ຄປຈ,ລົງວັນທີ 23/01/2014.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ( ສະບັບປັບປຸງ ).

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສ[illegible]

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 026 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ(ສະບັບປັບປຸງ)

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 27 ທັນວາ 2013

### ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນະຄອນຫຼວງວຽງຈັນ, ວັນທີ 27 ທັນວາ 2013**

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------------

ສະພາແຫ່ງຊາດ ເລກທີ 48 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 27 ທັນວາ 2013

# ກົດໝາຍ

# ວ່າດ້ວຍ ອຸດສາຫະກຳປຸງແຕ່ງ (ສະບັບປັບປຸງ)

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1(ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ສົ່ງເສີມອຸດສາຫະກຳປຸງແຕ່ງ ເພື່ອຊຸກຍູ້ການຜະລິດສິນຄ້າຢ່າງແຂງແຮງ, ສ້າງຖານກຳລັງການຜະລິດອຸດສາຫະກຳໃຫ້ເຂັ້ມແຂງ ເຮັດໃຫ້ອຸດສາຫະກຳປຸງແຕ່ງມີການພັດທະນາ ຂະຫຍາຍຕົວ, ມີຄວາມເປັນລະບຽບຮຽບຮ້ອຍ, ຮັບປະກັນຄວາມປອດໄພ ແລະ ປົກປັກຮັກສາສິ່ງແວດລ້ອມ ແນໃສ່ສ້າງວຽກເຮັດງານທຳ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ ປະກອບສ່ວນເຂົ້າໃນການສ້າງປະຖົມປັດໄຈໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວຢ່າງໜັກແໜ້ນ.

**ມາດຕາ 2(ປັບປຸງ) ອຸດສາຫະກຳປຸງແຕ່ງ**

ອຸດສາຫະກຳປຸງແຕ່ງ ແມ່ນ ກິດຈະກຳການຜະລິດ ດ້ວຍການນຳໃຊ້ເຄື່ອງຈັກ ແລະ ແຮງງານຄົນ ຢູ່ໃນໂຮງງານ ໂດຍຜ່ານຂະບວນການຜະລິດແປຮູບວັດຖຸດິບ ຫຼື ວັດຖຸເຄິ່ງສຳເລັດຮູບ ຈາກສະພາບເດີມໄປສູ່ຜະລິດຕະພັນໃໝ່ ເປັນສິນຄ້າ.

**ມາດຕາ 3(ໃໝ່) ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ສະຖານທີ່ຕັ້ງໂຮງງານ** ໝາຍເຖິງ ບໍລິເວນໂຮງງານຕັ້ງຢູ່ ໃນເຂດອຸດສາຫະກຳ, ນິຄົມອຸດສາຫະກຳ, ເຂດເສດຖະກິດພິເສດ, ເຂດການຜະລິດເພື່ອສົ່ງອອກ ຫຼື ສະຖານທີ່ອື່ນ;

2. **ເຄື່ອງຈັກ** ໝາຍເຖິງ ສິ່ງທີ່ປະກອບດ້ວຍຫຼາຍຊິ້ນສ່ວນ ເພື່ອໃຊ້ຜະລິດ, ນຳສົ່ງພະລັງງານ, ປ່ຽນ ຫຼື ສັບປ່ຽນທີ່ ຂອງພະລັງງານໃດໜຶ່ງ ເປັນພະລັງງານອື່ນ ດ້ວຍການໃຊ້ພະລັງນ້ຳ, ອາຍນ້ຳ, ນ້ຳມັນເຊື້ອໄຟ, ອາກາດ, ອາຍແກັດ, ໄຟຟ້າ, ພະລັງງານລົມ ຫຼື ພະລັງງານຊະນິດອື່ນ ຢ່າງໃດຢ່າງໜຶ່ງ ຫຼື ຫຼາຍຢ່າງລວມກັນ;

3. **ກຳລັງແຮງລວມຂອງເຄື່ອງຈັກ** ໝາຍເຖິງ ກຳລັງແຮງຂອງເຄື່ອງຈັກ ຫຼື ກຳລັງແຮງທຽບເທົ່າທັງໝົດ ທີ່ໄດ້ຕິດຕັ້ງຢູ່ໃນໂຮງງານ ຊຶ່ງມີຫົວໜ່ວຍຄິດໄລ່ເປັນແຮງມ້າ;

4. **ວັດຖຸດິບ** ໝາຍເຖິງ ວັດຖຸທີ່ໄດ້ມາຈາກຊັບພະຍາກອນແຮ່ທາດທຳມະຊາດ ເຊັ່ນ ໂລຫະ, ອະໂລຫະ, ມາຈາກແຫຼ່ງກະສິກຳ ແລະ ປ່າໄມ້ ເຊັ່ນ ພືດ ແລະ ສັດລ້ຽງປະເພດຕ່າງໆ ແລະ ມາຈາກສິ່ງເສດເຫຼືອ ເຊັ່ນ ເສດເຈ້ຍ, ເສດໄມ້, ເສດເຫຼັກ, ເສດຢາງປລາສະຕິກ;

5. **ວັດຖຸເຄິ່ງສຳເລັດຮູບ** ໝາຍເຖິງ ຜະລິດຕະພັນທີ່ໄດ້ຜ່ານຂັ້ນຕອນໃດໜຶ່ງຂອງຂະບວນການປຸງແຕ່ງມາແລ້ວ ເຊັ່ນ ຢາງປລາສະຕິກ, ເຫຼັກກ້າ, ແມ່ເຫຼັກ, ແກ້ວ, ແຜ່ນແພ, ວັດຖຸສັງເຄາະ ແລະ ອື່ນໆ ທີ່ສາມາດສືບຕໍ່ປຸງແຕ່ງ ເປັນສ່ວນປະກອບ ຫຼື ຜະລິດໃຫ້ກາຍເປັນຜະລິດຕະພັນສຳເລັດຮູບ;

6. **ຜະລິດຕະພັນອຸດສາຫະກຳປຸງແຕ່ງ** ໝາຍເຖິງ ໝາກຜົນທີ່ໄດ້ຮັບ ໂດຍຜ່ານຂະບວນການຜະລິດຂອງໂຮງງານ ຊຶ່ງນຳໃຊ້ອຸປະກອນ, ເຄື່ອງຈັກ, ເຕັກໂນໂລຊີ ຫຼື ແຮງງານຄົນ ເຂົ້າໃນຂະບວນການຜະລິດ;

7. **ເຂດກັນຊົນ** ໝາຍເຖິງ ເຂດສະຫງວນໄວ້ເປັນເຂດອ້ອມຮອບໂຮງງານ, ນັບແຕ່ອາຄານໂຮງງານ ເຖິງ ຮົ້ວ ຫຼື ກຳແພງໂຮງງານ ເພື່ອຮັບປະກັນຄວາມປອດໄພ ຕໍ່ສິ່ງແວດລ້ອມ;

8. **ອຸດສາຫະກຳສີຂຽວ** ໝາຍເຖິງ ອຸດສາຫະກຳ ທີ່ເປັນມິດກັບສິ່ງແວດລ້ອມ, ການນຳໃຊ້ສິ່ງເສດເຫຼືອຄືນໃໝ່, ການນຳໃຊ້ພະລັງງານຢ່າງມີປະສິດທິພາບ ເພື່ອຮັບປະກັນການຜະລິດແບບຍືນຍົງ;

9. **ອຸດສາຫະກຳແບບຄອບຄົວ** ໝາຍເຖິງ ອຸດສາຫະກຳທີ່ນຳໃຊ້ເຕັກໂນໂລຊີທີ່ງ່າຍດາຍ, ມີການລົງທຶນບໍ່ສູງ, ດຳເນີນກິດຈະການໃນຄົວເຮືອນ, ໃຊ້ແຮງງານໃນຄອບຄົວເປັນຕົ້ນຕໍ ທີ່ມີແຮງງານຕ່ຳກວ່າ 10 ຄົນ ຫຼື ໃຊ້ເຄື່ອງຈັກຂະໜາດນ້ອຍ ຕ່ຳກວ່າ 10 ແຮງມ້າ ຊ່ວຍໃນການຜະລິດ.

**ມາດຕາ 4(ໃໝ່) ນະໂຍບາຍກ່ຽວກັບວຽກງານອຸດສາຫະກຳປຸງແຕ່ງ**

ລັດ ຊຸກຍູ້, ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລົງທຶນໃສ່ການພັດທະນາອຸດສາຫະກຳປຸງແຕ່ງ ໃຫ້ກວ້າງຂວາງ ແລະ ກ້າວໄປສູ່ທັນສະໄໝ ຕາມທິດອຸດສາຫະກຳສີຂຽວ ເພື່ອຜະລິດສິນຄ້າທີ່ມີມູນຄ່າເພີ່ມສູງ, ສ້າງຄວາມອາດສາມາດແຂ່ງຂັນ ໂດຍເນັ້ນໃສ່ພັດທະນາອຸດສາຫະກຳທີ່ມີທ່າແຮງ, ອຸດສາຫະກຳຂະໜາດນ້ອຍ ແລະ ຂະໜາດກາງ, ຮັບປະກັນການພັດທະນາໄປສູ່ເຂດແຄວ້ນ ແລະ ທ້ອງຖິ່ນຫ່າງໄກສອກຫຼີກ, ສ້າງພື້ນຖານເສດຖະກິດ ໃຫ້ມີຄວາມໝັ້ນຄົງ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ ເພື່ອສ້າງວຽກເຮັດງານທຳ ແລະ ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ.

**ມາດຕາ 5(ໃໝ່) ຫຼັກການພື້ນຖານກ່ຽວກັບວຽກງານອຸດສາຫະກຳປຸງແຕ່ງ**

ຫຼັກການພື້ນຖານກ່ຽວກັບວຽກງານອຸດສາຫະກຳປຸງແຕ່ງ ມີ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ແລະ ຖືກຕ້ອງຕາມລະບຽບກົດໝາຍ;

2. ຮັບປະກັນການນຳໃຊ້ຊັບພະຍາກອນຢ່າງມີປະສິດທິພາບ, ການສ້າງມູນຄ່າເພີ່ມ, ການພັດທະນາແບບຍືນຍົງ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ;

3. ຮັບປະກັນມາດຕະຖານເຕັກນິກ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ ແລະ ຄວາມເປັນລະບຽບຮຽບຮ້ອຍ;

4. ຮັບປະກັນຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ສະເໝີພາບຕໍ່ໜ້າກົດໝາຍ.

**ມາດຕາ 6(ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການ ກ່ຽວກັບອຸດສາຫະກຳປຸງແຕ່ງ ທຸກປະເພດ, ທຸກຂະໜາດ ແລະ ທຸກລະດັບ ຢູ່ ສປປ ລາວ, ຍົກເວັ້ນອຸດສາຫະກຳແບບຄອບຄົວ.

ອຸດສາຫະກຳແບບຄອບຄົວ ມີ ລະບຽບການຄຸ້ມຄອງ ແລະ ສົ່ງເສີມສະເພາະ.

**ມາດຕາ 7(ປັບປຸງ) ການຮ່ວມມືສາກົນ**

ລັດ ຊຸກຍູ້ສົ່ງເສີມໃຫ້ມີການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານອຸດສາຫະກຳປຸງແຕ່ງ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ການຄົ້ນຄວ້າ ເພື່ອຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ເຮັດໃຫ້ວຽກງານດັ່ງກ່າວມີປະສິດທິຜົນ ແລະ ປະຕິບັດຕາມສົນທິສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ກິດຈະການອຸດສາຫະກຳປຸງແຕ່ງ
### ໝວດທີ 1
### ປະເພດອຸດສາຫະກຳປຸງແຕ່ງ

**ມາດຕາ 8(ປັບປຸງ) ປະເພດອຸດສາຫະກຳປຸງແຕ່ງ**

ປະເພດອຸດສາຫະກຳປຸງແຕ່ງ ໄດ້ຈັດແບ່ງຕາມລະຫັດສາລະບານການຈັດແບ່ງຂະແໜງເສດຖະກິດຂອງ ສປປ ລາວ ໂດຍສອດຄ່ອງກັບລະຫັດສາລະບານການຈັດແບ່ງຂອງສາກົນ ຊຶ່ງປະກອບດ້ວຍ:

1. ອຸດສາຫະກຳສະບຽງອາຫານ;